**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກອງທຶນສົ່ງເສີມ ຈນກ

ເລກທີ..0250../ທສວ
ນະຄອນຫຼວງວຽງຈັນ, ວັນທີ ..05..ມີນາ 2025

# ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ ສະໜອງບໍລິການຄູຝຶກ ພາຍໃຕ້ໂຄງການກໍ່ສ້າງຜູ້ປະກອບກິດຈະການໃໝ່ (New Entrepreneur Creation) ຫົວຂໍ້: ທັກສະໃນການລິເລີ່ມເປັນຜູ້ປະກອບກິດຈະການ ໃນຍຸກດິຈິຕ໋ອນ

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບອະນຸມັດງົບປະມານ ປະຈຳປີ 2025 ຂອງ ທສວ ເພື່ອຈັດຈ້າງບໍລິສັດທີ່ປຶກສາ ເພື່ອ *[ສະໜອງບໍລິການຄູຝຶກ ພາຍໃຕ້ຫົວຂໍ້: ທັກສະໃນການລິເລີ່ມເປັນຜູ້ປະກອບກິດຈະການໃນຍຸກດິຈິຕ໋ອນ ];*
2. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພົວພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876;
3. ທສວ ຂໍເຊີນບໍລິສັດທີ່ປຶກສາ " ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ) ມີດັ່ງນີ້:
   - ຕ້ອງເປັນບໍລິສັດ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ (ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ) ເປັນບໍລິສັດເອກະລາດ ສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ;
   - ຕ້ອງມີໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ມີຊ່ຽວຊານ ຫຼື ບຸກຄະລາກອນ ທີ່ມີປະສົບການ ໃນການສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່ ຢ່າງໜ້ອຍ 03 ປີຂຶ້ນໄປ ພ້ອມທັງສະແດງຫຼັກຖານຄວາມສຳເລັດໃນການບໍລິການທີ່ປຶກສາຢ່າງໜ້ອຍ 05 ສັນຍາ ທີ່ພົວພັນກັບ *[ການວິເຄາະການລົງທຶນ, ການວິເຄາະການຕະຫຼາດ ແລະ ການຂາຍອອນລາຍ, ການບໍລິຫານການເງິນ, ການອອກແບບຫຸ້ມຫໍ່ ແລະ ພັດທະນາຜະລິດຕະພັນ]* ໂດຍສະເພາະການບໍລິການທີ່ປຶກສາພາຍໃນປະເທດ;
   - ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ພະນັກງານຫຼັກ ເພື່ອເປັນຂໍ້ມູນໃນການຂະບວນການຄັດເລືອກເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ).

4. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ສະເພາະຄຸນນະພາບ (QBS)]* ຕາມຫຼັກການຈັດຊື້-ຈັດຈ້າງ ສໍາລັບງົບປະມານຂອງລັດ ທີ່ກໍານົດໄວ້ໃນບົດແນະນໍາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
5. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບ *[ສະໜອງບໍລິການຄູຝຶກ ພາຍໃຕ້ຫົວຂໍ້: ທັກສະໃນການລິເລີ່ມເປັນຜູ້ປະກອບກິດຈະການໃນຍຸກດິຈິຕ໋ອນ]* ດັ່ງກ່າວນີ້ ໄດ້ຕາມທີ່ຢູ່ຂ້າງລຸ່ມນີ້ໃນໂມງລັດຖະການ (8:30 ໂມງ ຫາ 16:00ໂມງ), ວັນຈັນ ເຖິງ ວັນສຸກ;
6. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ..08...ເມສາ 2025 ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສໍານັກງານສົ່ງເສີມຈຸນລະວິສາຫະກິດວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ, ເບີໂທ 021 410005, 020 2309 8876. 8

**ຜູ້ອໍານວຍການກອງທຶນ**

ປອ. ບຸນເພັງ ສີບຸນເຮືອງ